ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ແຜນງານ 5 ປີ ຄັ້ງທີ III ກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ຂອງ ສປປ ລາວ ແຕ່ປີ 2022-2026

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ສະໜັບສະໜູນໂດຍ:

ໂຄງການຮ່ວມມືລະຫວ່າງ ອົງການແຮງງານສາກົນ-ສາທາລະນະລັດ ເກົາຫຼີ

International Labour Organization

ທັນວາ 2022

# ຄຳນຳ

ວຽກຄວາມປອດໄພ ແລະ ສຸຂະພາບແຮງງານ ແມ່ນກິດຈະກຳຮ່ວມກັນລະຫວ່າງຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ ແລະ ແມ່ນຄວາມຈຳເປັນທີ່ລັດຖະບານ, ຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານ ຫຼື ຜູ້ລົງທຶນຕ້ອງໄດ້ຄຳນຶງເຖິງ ແລະ ເອົາໃຈໃສ່ ເພື່ອຈຳກັດການເກີດອຸປະຕິເຫດແຮງງານ ແລະ ພະຍາດອາຊີບກ່ອນຈະກາຍເປັນບັນຫາ ຫຼື ສ້າງຄວາມເສຍຫາຍທາງດ້ານສຸຂະພາບຮ່າງກາຍ, ຊັບສິນ ແລະ ຊີວິດຂອງຊາວຜູ້ອອກແຮງງານກໍຄືຜູ້ໃຊ້ແຮງງານ ແລະ ກະທົບຕໍ່ການພັດທະນາເສດຖະກິດ-ສັງຄົມ ຂອງປະເທດໂດຍລວມ. ອົງການແຮງງານສາກົນ[1] ໄດ້ຄາດຄະເນວ່າ: ສະເລ່ຍແລ້ວໄດ້ມີຜູ້ເສຍຊີວິດຍ້ອນການເກີດອຸປະຕິເຫດແຮງງານ ແລະ ພະຍາດອາຊີບ ປະມານ 6,000 ຄົນ ໃນແຕ່ລະມື້, ຊຶ່ງລວມແລ້ວມີຜູ້ເສຍຊີວິດຫຼາຍກວ່າ 2.2 ລ້ານຄົນ ໃນແຕ່ລະປີ ໃນນີ້ເສຍຊີວິດຈາກອຸປະຕິເຫດແຮງງານ ປະມານ 350,000 ຄົນ ແລະ ຫຼາຍກວ່າ 1.7 ລ້ານຄົນ ແມ່ນຈາກພະຍາດອາຊີບ.

ລັດຖະບານ ສປປ ລາວ ຍາມໃດກໍໃຫ້ຄວາມສຳຄັນ ແລະ ຖືເອົາວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານເປັນບູລິມະສິດໃນການປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານ ເພື່ອຮັບປະກັນສິດທິຂັ້ນພື້ນຖານຂອງຜູ້ອອກແຮງງານ ໃນການເຮັດວຽກທີ່ມີຄວາມປອດໄພ ແລະ ມີສຸຂະພາບແຮງງານທີ່ດີ ພ້ອມທັງຮຽກຮ້ອງທຸກພາກສ່ວນເສດຖະກິດ ໃນສັງຄົມມີສ່ວນຮ່ວມ ໃນການສ້າງນິຕິກຳ, ລະບຽບການຕ່າງໆ, ນະໂຍບາຍແຫ່ງຊາດ ກ່ຽວກັບວຽກງານດັ່ງກ່າວໃຫ້ແທດເໝາະກັບສະພາບຄວາມເປັນຈິງຂອງປະເທດ ແລະ ສອດຄ່ອງກັບມາດຕະຖານສາກົນ. ວຽກຄວາມປອດໄພ ແລະ ສຸຂະພາບແຮງງານ ແມ່ນເປັນປັດໃຈໜຶ່ງທີ່ສຳຄັນໃຫ້ແກ່ການດຳເນີນການຜະລິດຂອງບັນດາຫົວໜ່ວຍທຸລະກິດຕ່າງໆໂດຍສະເພາະແມ່ນການສ້າງຄວາມປອດໄພ ແລະ ສຸຂະພາບທີ່ດີໃຫ້ແກ່ຜູ້ອອກແຮງງານ ຫຼື ກຳລັງການຜະລິດຂອງປະເທດຊຶ່ງແມ່ນຄວາມຈຳເປັນຂອງລັດຖະບານທີ່ຈະຕ້ອງໄດ້ເອົາໃຈໃສ່ສ້າງໃຫ້ມີນະໂຍບາຍ ແລະ ນິຕິກຳທີ່ເໝາະສົມຢ່າງສອດຄ່ອງ ເພື່ອປ້ອງກັນ ຫຼື ຫຼຸດຜ່ອນການເກີດອຸບັດຕິເຫດແຮງງານ ແລະ ພະຍາດອາຊີບ ຊຶ່ງຕະຫຼອດໄລຍະເວລາຜ່ານມາ ສປປ ລາວ ໄດ້ເອົາໃຈໃສ່ແກ້ໄຂຫຼາຍບັນຫາສຳຄັນ ກ່ຽວກັບແຮງງານເພື່ອສົ່ງເສີມວຽກທີ່ມີຄຸນຄ່າ ແລະ ເປັນທຳໂດຍເນັ້ນໃສ່ການເຮັດວຽກຕາມກົນໄກຮ່ວມມືສາມຝ່າຍໃນການສ້າງກົດໝາຍວ່າດ້ວຍແຮງງານ, ກົດໝາຍວ່າດ້ວຍການປະກັນສັງຄົມ, ດຳລັດວ່າດ້ວຍຄວາມປອດໄພ ແລະ ສຸຂະພາບແຮງງານ ແລະ ລະບຽບການຕ່າງໆ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານ ປະຈຸບັນໄດ້ມີດຳລັດ ວ່າດ້ວຍຄວາມປອດໄພ ແລະ ສຸຂະພາບແຮງງານ ກໍໄດ້ຮັບຮອງຈາກລັດຖະບານ ໃນວັນທີ 5 ກຸມພາ 2019 ແລະ ໄດ້ສ້າງຕັ້ງຄະນະກຳມະການຄວາມປອດໄພ ແລະ ສຸຂະພາບແຮງງານ ຂັ້ນສູນກາງ ແລະ ຂັ້ນແຂວງ. ນອກນັ້ນພວກເຮົາມີແຜນຈະຍົກລະດັບດຳລັດຂຶ້ນເປັນກົດໝາຍວ່າດ້ວຍຄວາມປອດໄພ ແລະ ສຸຂະພາບແຮງງານ ໃຫ້ສຳເລັດໃນ 5 ປີ ຕໍ່ໜ້າ.

ສປປ ລາວ ໄດ້ເຂົ້າເປັນສະມາຊິກຂອງອົງການແຮງງານສາກົນ ໃນປີ 1964, ປະຈຸບັນໄດ້ໃຫ້ສັດຕະຍາບັນແກ່ສົນທິສັນຍາແຮງງານສາກົນທັງໝົດແລ້ວ 12 ສະບັບ; ໃນປີນີ້, ຍ້ອນເຫັນໄດ້ຄວາມສຳຄັນຂອງວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ພວກເຮົາກໍໄດ້ສະເໜີໃຫ້ສັດຕະຍາບັນແກ່ສົນທິສັນຍາສະບັບເລກທີ 155 ວ່າ

[1] International Labour Office, www.ilo.org/communication. FACTS ON Safety at Work

ດ້ວຍ ຄວາມປອດໄພ ແລະ ສຸຂະພາບແຮງງານ ແລະ ສົນທິສັນຍາສະບັບເລກທີ 187 ວ່າດ້ວຍ ຂອບແຜນງານສົ່ງເສີມຄວາມປອດໄພ ແລະ ສຸຂະພາບແຮງງານ.

ເຖິງຢ່າງໃດກໍຕາມ, ຄຽງຄູ່ກັບດ້ານຕັ້ງໜ້າທີ່ກ່າວມານັ້ນ ກໍຍັງມີສິ່ງທ້າທາຍຫຼາຍດ້ານທີ່ຈະຕ້ອງໄດ້ເພີ່ມທະວີເອົາໃຈໃສ່ແກ້ໄຂ ໃນສະເພາະໜ້າ ແລະ ຍາວນານ ໂດຍສະເພາະແມ່ນເຮັດໃຫ້ການຈັດຕັ້ງປະຕິບັດແຜນພັດທະນາວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ຢູ່ ສປປ ລາວໃຫ້ກາຍເປັນວັດທະນາທຳກ່ຽວກັບຄວາມປອດໄພ ແລະ ສຸຂະພາບແຮງງານໃນອະນາຄົດໃຫ້ໄດ້, ເພື່ອແກ້ໄຂບັນຫາຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍທີ່ເປັນອຸປະສັກຕໍ່ການພັດທະນາວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ໃນໄລຍະຜ່ານມາ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໄດ້ຮ່ວມງານກັບອົງການສາມຝ່າຍສືບຕໍ່ພັດທະນາແຜນງານ 5 ປີ ຄັ້ງ ທີ III ກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານຢູ່ ສປປ ລາວ ແຕ່ປີ 2022-2026 ທີ່ສອດຄ່ອງກັບບຸລິມະສິດ ໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ໂດຍໄດ້ກຳນົດບັນດາບຸລິມະ ສິດທີ່ຈະຕ້ອງໄດ້ສຸມໃສ່ແກ້ໄຂໃນໄລຍະ 5 ປີຕໍ່ໜ້າເປັນຕົ້ນ ແມ່ນການສ້າງຂີດຄວາມສາມາດ ແລະ ຄວາມເປັນເຈົ້າການຂອງເຈົ້າໜ້າທີ່ກວດກາແຮງງານ ຫຼື ອົງການຄຸ້ມຄອງແຮງງານທຸກຂັ້ນ. ເພື່ອເປັນການຜັນຂະຫຍາຍບູລິມະສິດດັ່ງກ່າວ, ແຜນງານ 5 ປີ ຄັ້ງທີ III ກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ຈະໄດ້ສຸມໃສ່ 5 ບຸລິມະສິດຕົ້ນຕໍຄື: ຂອບກົດໝາຍ, ພື້ນຖານໂຄງລ່າງ, ການສ້າງຂີດຄວາມສາມາດ, ຂໍ້ມູນ ແລະ ຂໍ້ມູນຂ່າວສານ, ການຄຸ້ມຄອງຄວາມປອດໄພ ແລະ ສຸຂະພາບແຮງງານຢູ່ສະຖານທີ່ເຮັດວຽກ ແລະ ການປະຕິບັດຕາມລະບຽບກົດໝາຍບັນດາບູລິມະສິດທັງໝົດຄາດຄະເນຜົນໄດ້ຮັບໃນປີ 2026.

ໃນນາມການນຳກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຂໍຮຽກຮ້ອງມາຍັງບັນດາທ່ານຄະນະຮັບຜິດຊອບອົງການຈັດຕັ້ງສາມຝ່າຍ, ຕາງໜ້າຈາກກະຊວງ ຂະແໜງການທີ່ກ່ຽວຂ້ອງ, ອົງການຈັດຕັ້ງສາກົນ ແລະ ສັງຄົມທຸກລະດັບ ນັບແຕ່ສູນກາງລົງຮອດທ້ອງຖິ່ນ, ບັນດາຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ ພ້ອມກັນຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດໃນຂັ້ນຂອງຕົນໃຫ້ປະກົດຜົນເປັນຈິງຕາມພາລະບົດບາດຂອງໃຜລາວ ເພື່ອສ້າງສະຕິເປັນເຈົ້າການໃຫ້ແກ່ຜູ້ອອກແຮງງານ, ຜູ້ໃຊ້ແຮງງານ ແລະ ທົ່ວສັງຄົມໃຫ້ມີສະຕິຕື່ນຕົວສູງ ເຫັນໄດ້ຄວາມສຳຄັນຂອງວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ, ຮ່ວມກັນຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດຕາມຄາດໝາຍ.

ນະຄອນຫຼວງວຽງຈັນ, ວັນທີ 21 ທັນວາ 2022

**ລັດຖະມົນຕີ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ລັດຖະມົນຕີ

ໃບຄຳ ຂັດທິຍະ

# ຄຳຂອບໃຈ

ການສ້າງແຜນງານ 5 ປີ ຄັ້ງທີ III ກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານຢູ່ ສປປ ລາວ ແຕ່ປີ 2022-2026 ແມ່ນຈະບໍ່ສຳເລັດໄດ້ ຖ້າປະສະຈາກການສະໜັບສະໜູນດ້ານວິຊາການຈາກພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະອົງການແຮງງານສາກົນປະຈຳ ສປປ ລາວ ແລະ ປະຈຳບາງກອກ ປະເທດໄທ ແລະ ບັນດາທ່ານຄະນະຮັບຜິດຊອບ ຈາກກະຊວງຂະແໜງການກ່ຽວຂ້ອງ ກະຊວງສາທາລະນະສຸກ; ກະຊວງອຸດສາຫະກຳ ແລະ ການຄ້າ; ກະຊວງກະສິກຳ ແລະ ປ່າໄມ້; ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ; ກະຊວງພະລັງງານ ແລະ ບໍ່ແຮ່; ກະຊວງໂຍທາທິການ ແລະ ຂົນສົ່ງ; ສູນກາງສະຫະພັນກຳມະບານລາວ; ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ທີ່ໄດ້ໃຫ້ການຊ່ວຍເຫຼືອແນະນຳ ແລະ ກວດແກ້ເນື້ອໃນແກ່ການຄົ້ນຄ້ວາສ້າງແຜນງານ 5 ປີ ຄັ້ງທີ III ກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ຢູ່ ສປປ ລາວ ແຕ່ປີ 2022-2026 ໃນຄັ້ງນີ້ຢ່າງເປັນເຈົ້າການ ແລະ ດ້ວຍຄວາມຮັບຜິດຊອບສູງ. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຂໍສະແດງຄວາມຂອບໃຈເປັນຢ່າງສູງຕໍ່ຄວາມເອົາໃຈໃສ່ປະກອບສ່ວນດ້ານຄວາມຮູ້ຄວາມສາມາດ ແລະ ປະສົບການດ້ານວຽກງານຂອງບັນດາທ່ານ ຈົນເຮັດໃຫ້ການສ້າງແຜນງານດັ່ງກ່າວໄດ້ຮັບຜົນສຳເລັດດ້ວຍດີ.

ອີກເທື່ອໜຶ່ງຂໍສະແດງຄວາມຂອບໃຈເປັນຢ່າງສູງມາຍັງອົງການແຮງງານສາກົນ, ອົງການອະນາໄມໂລກ ປະຈຳ ສປປ ລາວ ທີ່ໄດ້ປະກອບສ່ວນ ແລະ ສະໜັບສະໜູນທາງດ້ານວິຊາການ, ຊ່ຽວຊານ ແລະ ທຶນຮອນຕະຫຼອດໄລຍະເວລາຂອງການຈັດກິດຈະກຳຄົ້ນຄວ້າ, ປຶກສາຫາລື ກ່ຽວກັບການສ້າງແຜນງານ 5 ປີ ຄັ້ງທີ III ກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ແຕ່ປີ 2022-2026 ໃນຄັ້ງນີ້ຈົນໄດຮັບຜົນສຳເລັດດ້ວຍດີ ແລະ ກໍຫວັງວ່າທາງອົງການແຮງງານສາກົນຈະສືບຕໍ່ໃນການສະໜັບສະໜູນ ສປປ ລາວ ກໍຄືກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໃຫ້ສາມາດຈັດຕັ້ງປະຕິບັດແຜນດັ່ງກ່າວໃຫ້ບັນລຸຕາມຈຸດປະສົງ ແລະ ເປົ້າໝາຍທີ່ວາງໄວ້.

**ກະຊວງແຮງງານ ແລະ ສະຫວັດດີການສັງຄົມ**

# ຄຳສັບຫຍໍ້

| | |
|---|---|
| ASEAN | ສະມາຄົມປະຊາຊາດອາຊີຕາເວັນອອກສຽງໃຕ້ |
| ILO | ອົງການແຮງງານສາກົນ |
| ROAP | ຫ້ອງການພາກພື້ນອາຊີ ແລະ ປາຊີຟິກ |
| MoLSW | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (ຮສສ) |
| LCCNI | ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ |
| LFTU | ສູນກາງສະຫະພັນກຳມະບານລາວ |
| LNA | ສະພາແຫ່ງຊາດລາວ |
| MoAF | ກະຊວງກະສິກຳ ແລະ ປ່າໄມ້ |
| MoCI | ກະຊວງ ອຸດສາຫະກຳແລະ ການຄ້າ |
| MoE | ກະຊວງສຶກສາທິການ ແລະ ກິລາ |
| MoEM | ກະຊວງພະລັງງານ ແລະ ບໍ່ແຮ່ |
| MoH | ກະຊວງສາທາລະນະສຸກ |
| MoJ | ກະຊວງຍຸຕິທຳ |
| MoNRE | ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ |
| MoPT | ກະຊວງໂຍທາທິການ ແລະ ຂົນສົ່ງ |
| OPML | ຫ້ອງການສຳນັກງານນາຍົກລັດຖະມົນຕີ |
| OSH | ຄວາມປອດໄພ ແລະ ສຸຂະພາບແຮງງານ |
| SSI | ປະກັນສັງຄົມ |
| SSO | ອົງການປະກັນສັງຄົມແຫ່ງຊາດ |
| SSP | ແຜນງານປະກັນສັງຄົມ |
| WHO | ອົງການອະນາໄມໂລກ |

ສາລະບານ


ຄຳນຳ .......... 2

ຄຳຂອບໃຈ .......... 4

ຄຳສັບຫຍໍ້.......... 5

ບົດນຳ .......... 8

I. ເຫດຜົນ ແລະ ຄວາມເປັນມາ .......... 9

1. ວິໄສທັດ .......... 10

2. ພັນທະກິດ .......... 10

3. ບູລິມະສິດ .......... 11

3.1. ບູລິມະສິດທີ 1: .......... 11

ຜົນໄດ້ຮັບທີ່ຄາດຫ້ວງໄວ້: .......... 11

3.2. ບູລິມະສິດທີ 2: .......... 11

ຜົນໄດ້ຮັບທີ່ຄາດຫ້ວງໄວ້: .......... 11

3.3. ບູລິມະສິດທີ 3: .......... 12

ຜົນໄດ້ຮັບທີ່ຄາດຫ້ວງໄວ້: .......... 12

3.4. ບູລິມະສິດທີ 4: .......... 12

ຜົນໄດ້ຮັບທີ່ຄາດຫ້ວງໄວ້: .......... 12

3.5. ບູລິມະສິດທີ 5: .......... 12

ຜົນໄດ້ຮັບທີ່ຄາດຫ້ວງໄວ້ .......... 12

II. ກອບການຈັດຕັ້ງປະຕິບັດ .......... 12

III. ຍຸດທະສາດສຳຫຼັບການຈັດຕັ້ງປະຕິບັດ.......... 13

IV. ຊັບພະຍາກອນ .......... 13

V. ການຕິດຕາມ ແລະ ການປະເມີນ .......... 13

5.1. ລະບົບຕິດຕາມ ແລະ ປະເມີນ .......... 14

ຕົວຊີ້ວັດສຳຫຼັບການຕິດຕາມ ແລະ ການປະເມີນຜົນ ........ 14

5.2. ແຜນການຕິດຕາມ ແລະ ປະເມີນຜົນ ........ 14

5.3. ວິທີການຕິດຕາມ ແລະ ການປະເມີນຜົນ........ 14

VI. ການລາຍງານ ........ 14

ກິດຈະກຳທີ່ຕ້ອງໄດ້ຈັດຕັ້ງປະຕິບັດຢູ່ໃນແຜນງານ 5 ປີ ຄັ້ງທີ III ກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ຢູ່ ສປປ ລາວ ແຕ່ 2022-2026........ 15

ຕາຕະລາງ ທີ 1. ກອບກິດຈະກຳສຳຫຼັບ 5 ບຸລິມະສິດ ກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ (OSH)........ 16

1.3. ນະໂຍບາຍດ້ານຄວາມປອດໄພ ແລະ ສຸ ຂະພາບແຮງງານໄດ້ຖືກພັດທະນາຂຶ້ນ........ 16

# ບົດນຳ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ) ເປັນປະເທດທີ່ບໍ່ມີຊາຍແດນຕິດຈອດກັບທະເລ, ມີຫຼາຍຊົນເຜົ່າ ແລະ ພູມມີປະເທດເປັນເຂດພູດອຍ, ມີປະຊາກອນປະມານ 7, 2 ລ້ານຄົນ. ສປປ ລາວມີຊາຍແດນຕິດກັບລາ ຊະອານາຈັກກຳປູເຈຍ, ສາທາລະນະລັດປະຊາຊົນຈີນ, ສາທາລະນະລັດສະຫະພາບມຽນມາ, ລາຊະອານາຈັກໄທ, ແລະ ສາທາລະນະລັດສັງຄົມນິຍົມຫວຽດນາມ. ດ້ານການປົກຄອງທົ່ວປະເທດແບ່ງອອກເປັນ 18 ແຂວງ ລວມເອົານະຄອນຫຼວງວຽງຈັນ, ມີ 148 ເມືອງ ແລະ 8,421 ບ້ານ.[2]

ໃນໄລຍະ 10 ປີຜ່ານມາ, ສປປ ລາວ ໄດ້ມີຄວາມໝັ້ນຄົງທາງດ້ານການເມືອງ, ປະເທດມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍທາງສັງຄົມ ແລະ ການຮ່ວມມືສາກົນຢ່າງກ້ວາງຂວາງ, ໄດ້ເຮັດໃຫ້ມີຄວາມຈະເລີນຮຸ່ງເຮືອງ ຫຼື ເສດ ຖະກິດຂະຫຍາຍຕົວຢ່າງໄວວາ ແລະ ຕໍ່ເນື່ອງ ເຊິ່ງເຮັດໃຫ້ມີການສ້າງວຽກເຮັດງານທຳເພີ່ມຫລາຍຂຶ້ນເລື້ອຍໆທາງດ້ານສະຫວັດດີການສັງຄົມ ຂອງປະຊາຊົນໃນທົ່ວປະເທດກໍນັບມື້ດີຂຶ້ນ. ຄຽງຄູ່ກັບການພັດທະນາທາງດ້ານເສດຖະກິດ-ສັງຄົມ ແລະ ການລົງທຶນພາຍໃນປະເທດທາງດ້ານການຜະລິດ ແລະ ກະສິກຳ, ລັດຖະບານໄດ້ພະຍາຍາມສ້າງສະພາບແວດລ້ອມໃນການເຮັດວຽກທີ່ປອດໄພ ແລະ ສຸຂະພາບທີ່ດີໃຫ້ແກ່ຜູ້ອອກແຮງງານພາຍໃນ ສປປ ລາວ. ລັດຖະບານ ສປປ ລາວໄດ້ໃຫ້ຄວາມສຳຄັນ, ເອົາໃຈໃສ່ຢ່າງຕັ້ງໜ້າຕໍ່ວຽກວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ, ໃຫ້ການຮ່ວມມືກັບອົງການແຮງງານສາກົນ, ອົງການຈັດຕັ້ງສາກົນ ແລະ ຈາກລັດຖະບານໃນບັນດາປະເທດອາຊຽນ ແລະ ສະຫະພາບເອີຣົບ ເພື່ອຂໍການຊ່ວຍເຫຼືອສະໜັບສະໜູນທາງດ້ານເຕັກນິກວິຊາການ ແລະ ທຶນຮອນຕ່າງໆເພື່ອສະໜັບສະໜູນເຂົ້າໃນການພັດທະນາລະ ບົບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານຢ່າງມີປະສິດທິຜົນເຊິ່ງເປັນຄວາມພະຍາຍາມຮ່ວມມືຂອງລັດຖະບານ ແລະ ຄູ່ຮ່ວມງານທາງສັງຄົມພາຍໃນປະເທດ.

ລະບົບຄວາມປອດໄພ ແລະ ສຸຂະພາບແຮງງານ ປະກອບດ້ວຍຫຼາຍອົງປະກອບ ລວມທັງນິຕິກຳ ແລະ ກົນໄກການປະຕິບັດຕາມການຊີ້ນຳຂອງກອບການສົ່ງເສີມວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ແລະ ສົນທິສັນຍາສິນກົນ, 1981 (ສະບັບເລກທີ 187) ແລະ ຄຳແນະນຳ, 2006 (ສະບັບເລກທີ 197) [3]. ຄວາມມຸ້ງຫ້ວງຕໍ່ການປັບປຸງສະພາບແວດລ້ອມການເຮັດວຽກທີ່ປອດໄພ ແລະ ສຸຂະພາບຂອງຜູ້ອອກແຮງງານທຸກຄົນ. ລັດຖະບານ ສປປ ລາວ ໄດ້ຮັບຮອງເອົາກົດໝາຍ ວ່າດ້ວຍແຮງງານໃນປີ 2014. ນອກນັ້ນ, ກໍໄດ້ຜັນຂະຫຍາຍເປັນດຳລັດ ວ່າດ້ວຍຄວາມປອດໄພ ແລະ ສຸຂະພາບແຮງງານ ແລະ ຮັບຮອງເອົາໂດຍລັດຖະບານ ໃນປີ 2019.

ການພັດທະນາລະບົບຄວາມປອດໄພ ແລະ ສຸຂະພາບແຮງງານຢູ່ໃນ ສປປ ລາວ ເຫັນວ່າຍັງເປັນສິ່ງທ້າທາຍຫຼາຍ ເນື່ອງຈາກວ່າເປັນວຽກງານໃໝ່ ແລະ ສັງຄົມກໍຍັງບໍ່ທັນເຂົ້າໃຈຢ່າງທົ່ວເຖິງ ຫຼື ເລິກເຊິ່ງ. ເຖິງວ່າຈະມີກົດໝາຍວ່າດ້ວຍແຮງງານ ແລະ ດຳລັດວ່າດ້ວຍຄວາມປອດໄພ ແລະ ສຸຂະພາບແຮງງານກໍຕາມ, ແຕ່ລະບົບການຄຸ້ມຄອງຍັງບໍ່ພຽງພໍ, ຍັງບໍ່ທັນມີນະໂຍບາຍວ່າດ້ວຍຄວາມປອດໄພ ແລະ ສຸຂະພາບແຮງງານ, ລະບົບການຄຸ້ມຄອງຂໍ້ມູນຍັງບໍ່ທັນຮັບປະກັນ ແລະ ລວມສູນ, ລວມທັງລະບົບບັນທຶກເອກະສານ, ການເຜີຍແຜ່ ແລະ ລະບົບການຄຸ້ມຄອງຄວາມປອດໄພ ແລະ ສຸຂະພາບແຮງງານຍັງບໍ່ເຂັ້ມແຂງ, ການໃຫ້ສັດຕະຍາບັນສົນທິສັນຍາສາກົນຍັງມີຄວາມຈຳກັດ, ຄວາມສາມາດໃນການບັງຄັບໃຊ້ລະບຽບກົດໝາຍດ້ານຄວາມປອດໄພ ແລະ ສຸຂະພາບແຮງງານຍັງບໍ່ເຂັ້ມແຂງພໍ, ການຮ່ວມມື, ການປະສານງານລະຫວ່າງບັນດາພາກສ່ວນກ່ຽວຂ້ອງ, ຄວາມອາດສາມາດຍັງບໍ່ສູງ ແລະ ຂາດລະບົບຄຸ້ມຄອງທີ່ເຂັ້ມແຂງ ແລະ ຕາມທີ່ໄດ້ອະທິບາຍໄວ້ໃນແຜນງານ 5 ປີ ຄັ້ງທີ II ກ່ຽວກັບວຽກງານຄວາມ

---

[2] Government of the Lao People's Democratic Republic, 2014.

[3] National Programme and Systems of Occupational Safety and Health.2006. ITC-ILO

ປອດໄພ ແລະ ສຸຂະພາບແຮງງານ ຂອງ ສປປ ລາວ. ໃນປີ 2021 ແມ່ນເປັນສິ່ງທ້າທາຍຫຼາຍໃນການຈັດຕັ້ງປະຕິບັດລະບົບຄວາມປອດໄພ ແລະ ສຸຂະພາບແຮງງານຢູ່ໃນ ສປປ ລາວ.

## I. ເຫດຜົນ ແລະ ຄວາມເປັນມາ

ແຜນງານ 5 ປີ ຄັ້ງທີ III ກ່ຽວກັບວຽກງານຄວາມຄວາມປອດໄພ ແລະ ສຸຂະພາບແຮງງານ ຢູ່ ສປປ ລາວ ແຕ່ປີ 2022-2026 ໄດ້ຮັບການສ້າງຂຶ້ນບົນພື້ນຖານຄວາມສຳເລັດ ແລະ ການຖອດຖອນບົດຮຽນໄດ້ຈາກການຈັດຕັ້ງປະຕິບັດແຜນງານ 5 ປີ ຄັ້ງທີ I ແລະ II ກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ແລະ ຈາກການທົບທວນຄືນດ້ານຂໍ້ມູນພື້ນຖານຂອງລະບົບຄວາມປອດໄພ ແລະ ສຸຂະພາບແຮງງານຂອງລາວ ຄັ້ງທີ II. ສະພາບຄວາມປອດໄພ ແລະ ສຸຂະພາບແຮງງານຢູ່ໃນປະຈຸບັນຕໍ່ກັບດ້ານຜົນສຳເລັດ ແລະ ບັນຫາຫຍຸ້ງຍາກທີ່ເປັນສິ່ງທ້າທາຍຫລາຍຢ່າງທີ່ໄດ້ຖືກນຳມາວິເຄາະໂດຍອີງໃສ່ຂໍ້ມູນທີ່ສະໜອງໃຫ້ຈາກປະຫັວດຄວາມປອດໄພ ແລະ ສຸຂະພາບແຮງງານ ຄັ້ງທີ II, ເຊິ່ງປະກອບດ້ວຍນະໂຍບາຍທີ່ກ່ຽວຂ້ອງກ່ຽວກັບກັບຄວາມປອດໄພ ແລະ ສຸຂະພາບແຮງງານ, ກອບນິຕິກຳ ແລະ ການປະຕິບັດ, ກິດຫມາຍ ແລະ ກົດລະບຽບການ, ໂຄງສ້າງພື້ນຖານຂອງສະຖາບັນ, ຊັບພະຍາກອນທີ່ມີຢູ່ ແລະ ການປ້ອງກັນການບາດເຈັບຢູ່ໃນສະຖານທີ່ເຮັດວຽກ. ລະບົບການຄຸ້ມຄອງຄວາມປອດໄພ ແລະ ສຸຂະພາບແຮງງານຢູ່ໃນສະຖານທີ່ເຮັດວຽກ. ທັງໝົດນີ້ໄດ້ກະຕຸ້ນໃຫ້ມີການສົນທະນາກ່ຽວກັບວິທີທາງທີ່ເປັນໄປໄດ້ເພື່ອປັບປຸງວຽກງານດ້ານຄວາມປອດໄພ ແລະ ສຸຂະພາບແຮງງານໃນປະຈຸບັນໃຫ້ສອດຄ່ອງກັບມາດຕະຖານແຮງງານສາກົນ ແລະ ການປະຕິບັດທີ່ດີ, ໂດຍຜ່ານແຜນງານ. ຜົນໄດ້ຮັບຂອງການທົບທວນຄືນຂໍ້ມູນຄວາມປອດໄພ ແລະ ສຸຂະພາບແຮງງານ ຄັ້ງທີ II ໄດ້ສະແດງໃຫ້ເຫັນເຖິງຄວາມຫຍຸ້ງຍາກຫຼາຍຢ່າງໃນການຄຸ້ມຄອງກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ຢູ່ພາຍໃນປະເທດລາວ.

ສປປ ລາວ ໄດ້ຮັບຮອງເອົາ ແລະ ຈັດຕັ້ງປະຕິບັດແຜນງານ 5 ປີ ຄັ້ງທີ I (ປີ 2005-2010) ກ່ຽວກັບວຽກງານ ຄວາມປອດໄພ ແລະ ສຸຂະພາບແຮງງານ ເພື່ອພັດທະນາຂະຫຍາຍຕາໜ່າງການປົກປ້ອງຄວາມປອດໄພ ແລະ ສຸຂະພາບແຮງງານໃຫ້ທົ່ວເຖິງ. ແຜນງານ 5 ປີ ຄັ້ງທີ I ກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ສຳລັບ ສປປ ລາວ ແຕ່ປີ 2005-2010 ແມ່ນມີຊື່ວ່າແຜນແມ່ບົດດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ, ເຊິ່ງໄດ້ຮັບຮອງເອົາໂດຍລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ສະບັບເລກທີ 2993/ “ຮສສ” ລສວ ລົງວັນທີ 24 ສິງຫາ 2005. ແຜນງານຄວາມປອດໄພ ແລະ ສຸຂະພາບແຮງງານ ຄັ້ງທີ I ມີ 15 ຈຸດປະສົງ ລວມມີລາຍລະອຽດຂອງກິດຈະກຳຕ່າງໆ ແລະ ຕົວຊີ້ວັດພ້ອມທັງຊື່ອົງການທີ່ຮັບຜິດຊອບໃນການຈັດຕັ້ງປະຕິບັດກິດຈະກຳເຫຼົ່ານັ້ນ. ກະຊວງແຮງງານ ແລະ ສະຫັວດດີການສັງຄົມໄດ້ສົມທົບກັບອົງການຈັດຕັ້ງສາມຝ່າຍ ແລະ ກະຊວງທີ່ກ່ຽວຂ້ອງຮ່ວມກັນຈັດຕັ້ງປະຕິບັດບັນດາກິດຈະ ກຳເຫຼົ້ານັ້ນທີ່ໄດ້ສະເໜີມາຢູ່ໃນ 15 ເປົ້າໝາຍໃຫ້ບັນລຸໄດ້ຕາມຄາດໝາຍ, ໃນນັ້ນລວມມີການຈັດຕັ້ງຄະນະບໍລິຫານງານອົງການສາມຝ່າຍ ກ່ຽວກັບຄວາມປອດໄພ ແລະ ສຸຂະພາບແຮງງານ, ການສ້າງຂີດຄວາມອາດສາມາດຂອງພະນັກງານກວດກາແຮງງານ, ພັດທະນາເຄື່ອງມື ແລະ ນິຕິກຳ ເພື່ອຊ່ວຍໃນການຈັດຕັ້ງປະຕິບັດຄວາມປອດໄພ ແລະ ສຸຂະພາບແຮງງານ, ການປົກປ້ອງອຸບັດຕິເຫດແຮງງານຈາກການເຮັດວຽກ, ຄວາມປອດໄພ ແລະ ສຸຂະພາບແຮງງານ ຢູ່ໃນວິສາຫະກິດຂະຫນາດນ້ອຍ ແລະ ຂະແໜງການກໍ່ສ້າງ.

ແຜນງານ 5 ປີ, ຄັ້ງທີ II ກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ແຕ່ປີ 2011-2015 ໄດ້ຖືກສ້າງຂຶ້ນໂດຍພາຍໃຕ້ການປຶກສາຫາລືກັບບັນດາຄູ່ຮ່ວມງານອົງການສາມຝ່າຍ, ທາງສັງຄົມ ແລະ ອົງການແຮງງານສາກົນ ໂດຍພາຍໃຕ້ການສະໜັບສະໜູນດ້ານທຶນຮອນຈາກລັດຖະບານລາວ ແລະ ອົງການຈັດຕັ້ງສາກົນທັງພາຍໃນ ແລະ ຕ່າງປະເທດ ລວມມີອົງການແຮງງານສາກົນ/ສ.ເກົາຫຼີ. ແຜນງານ 5 ປີ ຄັ້ງທີ II ກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ປະກອບມີ 9 ຂອບເຂດບູລິມະສິດ, ໄດ້ຖືກຮັບຮອງເອົາໂດຍຈາກກະຊວງແຮງ

ງານ ແລະ ສະຫັວດດີການສັງຄົມ ໃນເດືອນ ມິຖຸນາ ປີ 2011, ສໍາລັບການຈັດຕັ້ງປະຕິບັດ ແຕ່ປີ 2011-2015. ບັນດາຂົງເຂດເປົ້າໝາຍລວມມີການຜັນຂະຫຍາຍນະໂຍບາຍ, ນິຕິກໍາ, ຝຶກອົບຮົມໃຫ້ຜູ້ອອກແຮງງານ, ປັບປຸງຄວາມເຂົ້າໃຈຂອງຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານ ກ່ຽວກັບຄວາມປອດໄພ ແລະ ສຸຂະພາບແຮງງານຢູ່ໃນສະຖານທີ່ເຮັດວຽກ.

ເຖິງວ່າໄລຍະເວລາຂອງການຈັດຕັ້ງປະຕິບັດແຜນງານ ຄັ້ງທີ II ກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ແມ່ນໄດ້ຮັບການຈັດຕັ້ງປະຕິບັດ ແຕ່ປີ 2011 - 2015 ກໍຕາມ ແຕ່ບັນດາກິດຈະກໍາຂອງແຜນງານດັ່ງກ່າວແມ່ນຍັງສາມາດດໍາເນີນຕໍ່ໄປໄດ້ ແລະ ໄດ້ສືບຕໍ່ຈັດຕັ້ງປະຕິບັດຈົນມາເຖິງປີ 2021. ຫຼັງຈາກ 6 ປີຜ່ານໄປແລ້ວນັບແຕ່ການຈັດຕັ້ງແຜນງານ 5 ປີ ຄັ້ງທີ 2 ກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານສໍາເລັດລົງ, ຄະນະກໍາມະການຮັບຜິດຊອບອົງການຈັດຕັ້ງສາມຝ່າຍຂອງສປປ ລາວ ໂດຍພາຍໃຕ້ການຊີ້ນໍາໆພາຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ທັງເປັນເຈົ້າການຫຼັກ ແມ່ນໄດ້ມີຄວາມຈໍາເປັນ ແລະ ໃຫ້ຄວາມສໍາຄັນສູງແກ່ການພັດທະນາແຜນງານ 5 ປີ ຄັ້ງທີ III ກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ຢູ່ສປປ ລາວ. ເພື່ອຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງສະພາບການປະຈຸບັນທີ່ເປັນບູລິມະສິດຈໍາເປັນຂອງປະເທດ ແລະ ໄດ້ຊອກຫາການຊ່ວຍເຫຼືອທາງດ້ານວິຊາການ, ທຶນຊ່ວຍເຫຼືອຈາກອົງການແຮງງານສາກົນ, ປະຕິບັດຕາມຄໍາແນະນໍາດ້ານວິຊາການຂອງອົງການແຮງງານສາກົນ, ຂະບວນການພັດທະນາແຜນງານ 5 ປີ ຄັ້ງທີ່ III ກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ລວມມີສາມຂັ້ນຕອນຕໍ່ໄປນີ້ ຄື: 1). ການພັດທະນາປະຫັວດຄວາມປອດໄພ ແລະ ສຸຂະພາບແຮງງານຄັ້ງທີ II; 2). ການວິເຄາະທົບທວນຄືນປະຫັວດຄວາມປອດໄພ ແລະ ສຸຂະພາບແຮງງານຄັ້ງທີ II ແລະ ການປະເມີນຜົນງານຂອງແຜນງານວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານຄັ້ງທີ່ຜ່ານມາ; 3). ການສ້າງບູລິມະສິດຕ່າງໆສໍາລັບແຜນງານ 5 ປີ ຄັ້ງທີ III ກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ. ໃນທຸກໆຂັ້ນຕອນການດໍາເນີນວຽກງານອົງການຈັດຕັ້ງສາມຝ່າຍສົມທົບກັບພາກສ່ວນກ່ຽວຂ້ອງໄດ້ມີສ່ວນຮ່ວມໃນຮູບແບບຂອງຄະນະກໍາມະການຮັບຜິດຊອບສ້າງແຜນຄັ້ງນີ້ຊຶ່ງນໍາພາໂດຍກະຊວງແຮງງານ ແລະ ສະຫັວດດີການສັງຄົມ. ແຜນງານ 5 ປີ ຄັ້ງທີ III ກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ຂອງ ສປປ ລາວ ເປັນຍຸດທະສາດສໍາຄັນຕໍ່ການຄຸ້ມຄອງວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານທີ່ຈະດໍາເນີນໄປພາຍໃນ 5 ປີຕໍ່ໜ້າ ແຕ່ປີ 2022-2026.

## 1. ວິໄສທັດ

- ສະພາບແວດລ້ອມການເຮັດວຽກທີ່ປອດໄພ ແລະ ມີສຸຂະພາບທີ່ດີ ແລະ ວັດທະນາທໍາໃນການປ້ອງກັນແມ່ນໄດ້ຖືກຮັບປະກັນ ແລະ ໄດ້ຖືກສົ່ງເສີມຢູ່ທຸກສະຖານທີ່ເຮັດວຽກ.

## 2. ພັນທະກິດ

- ຮັບຮອງສະພາບແວດລ້ອມບ່ອນເຮັດວຽກທີ່ປອດໄພ ແລະ ສຸຂະພາບດີສໍາລັບຜູ້ອອກແຮງງານທັງໝົດ ໂດຍການວາງແຜນ ແລະ ສົ່ງເສີມການໃຊ້ມາດຕະຖານ ແລະ ການສະໜອງຂໍ້ມູນຂ່າວສານ, ການຝຶກອົບຮົມ ແລະ ການຊ່ວຍເຫຼືອທາງດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ.

- ຮັບຮອງວ່າສະຖານທີ່ບ່ອນເຮັດວຽກ ແມ່ນມີຄວາມປອດໄພ ແລະ ບໍ່ເປັນອັນຕະລາຍຕໍ່ສຸຂະພາບຂອງຜູ້ອອກແຮງງານ.

- ສະໜອງການກວດກາຄວາມປອດໄພ ແລະ ສຸຂະພາບແຮງງານແບບຮັດກຸມ ແລະ ມີຄຸນນະພາບຢູ່ທຸກໆສະຖານທີ່ເຮັດວຽກ ລວມທັງການບໍລິການໃຫ້ຄໍາປຶກສາ ແລະ ການຝຶກອົບຮົມ.

- ເພີ່ມທະວີການຮ່ວມມືລະຫວ່າງບັນດາຄູ່ຮ່ວມງານຈາກຫຼາຍພາກສ່ວນລວມທັງອົງການພາກລັດ, ອົງການທີ່ບໍ່ແມ່ນລັດ ຖະບານ ແລະ ເອກະຊົນ ເພື່ອປັບປຸງຄວາມປອດໄພ ແລະ ສຸຂະພາບຢູ່ສະຖານທີ່ເຮັດວຽກຢູ່ພາຍໃນ ສປປ ລາວ.

- ຊ່ວຍເຫຼືອຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານທຸກຄົນໃນການພັດທະນາວັດທະນະທຳທີ່ດີທາງດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ ເພື່ອການເຮັດວຽກຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

## 3. ບູລິມະສິດ

ແຜນງານ 5 ປີ ຄັ້ງທີ III ກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ຂອງ ສປປ ລາວ ແຕ່ປີ 2022-2026 ແມ່ນຈະໄດ້ສຸມໃສ່ຈັດຕັ້ງປະຕິບັດ 5 ບຸລິມະສິດຕົ້ນຕໍຄື: ກອບກົດໝາຍ ແລະ ພື້ນຖານໂຄງລ່າງ, ການສ້າງຂີດຄວາມສາມາດ, ຂໍ້ມູນ ແລະ ຂໍ້ມູນຂ່າວສານ, ການຄຸ້ມຄອງຄວາມປອດໄພ ແລະ ສຸຂະພາບແຮງງານ ຢູ່ໃນສະຖານທີ່ເຮັດວຽກ ແລະ ການປະຕິບັດຕາມລະບຽບກົດໝາຍ. ແຕ່ລະບຸລິມະສິດ, ຜົນໄດ້ຮັບທີ່ຄາດຫວັງໄວ້ວ່າແມ່ນຈະຮັບຜົນສຳເລັດໃນທ້າຍປີ 2026 ຕາມທີ່ໄດ້ຖືກກຳນົດໄວ້.

### 3.1. ບູລິມະສິດທີ 1:

ສ້າງກອບກົດໝາຍ ແລະ ນະໂຍບາຍກ່ຽວກັບຄວາມປອດໄພ ແລະ ສຸຂະພາບແຮງງານ.

**ຜົນໄດ້ຮັບທີ່ຄາດຫວັງໄວ້:**

- ການຈັດຕັ້ງປະຕິບັດ ດຳລັດ ວ່າດ້ວຍຄວາມປອດໄພ ແລະ ສຸຂະພາບແຮງງານ ແມ່ນໄດ້ຮັບການທົບທວນຄືນ ແລະ ໄດ້ລາຍງານເປັນໄລຍະ;
- ກອບນິຕິກຳໄດ້ຖືກວິເຄາະໃຫ້ສອດຄ່ອງກັບມາດຕະຖານແຮງງານສາກົນ;
- ນະໂຍບາຍແຫ່ງຊາດດ້ານວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານໄດ້ຖືກພັດທະນາຂຶ້ນ.

### 3.2. ບູລິມະສິດທີ 2:

ສ້າງຂີດຄວາມອາດສາມາດທາງດ້ານວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານຢູ່ໃນທຸກລະດັບ.

**ຜົນໄດ້ຮັບທີ່ຄາດຫວັງໄວ້:**

- ຄວາມອາດສາມາດຂອງພະນັກງານກວດກາແຮງງານ, ຄະນະກຳມະການ ແລະ ພະນັກງານຄວາມປອດໄພ ແລະ ສຸຂະພາບແຮງງານຢູ່ບ່ອນເຮັດວຽກເຂັ້ມແຂງຂຶ້ນ;
- ລະບົບຮັບຮອງຢັ້ງຢືນດ້ານວິຊາຊີບຄວາມປອດໄພ ແລະ ສຸຂະພາບແຮງງານແມ່ນໄດ້ຖືກສ້າງຂຶ້ນ.
- ແຜນງານຝຶກອົບຮົມຄວາມປອດໄພ ແລະ ສຸຂະພາບແຮງງານທີ່ແນໃສ່ທຸກລະດັບ, ພັດທະນາຂຶ້ນໂດຍການຮ່ວມມືກັບສະຖາບັນການສຶກສາ, ຝຶກອົບຮົມວິຊາຊີບສີມືແຮງງານ ແລະ ພາກສ່ວນວິສາຫະກິດ, ສອດຄ່ອງກັບກອບຂອງອາຊຽນ.

### 3.3. ບູລິມະສິດທີ 3:

ສ້າງ ແລະ ພັດທະນາລະບົບການເກັບກຳ, ຄຸ້ມຄອງ, ເຜີຍແຜ່ຂໍ້ມູນ ແລະ ຂໍ້ມູນຂ່າວສານຕ່າງໆກ່ຽວກັບອຸປະຕິເຫດທາງດ້ານອາຊີບ, ການບາດເຈັບ ແລະ ພະຍາດຕ່າງໆ.

**ຜົນໄດ້ຮັບທີ່ຄາດຫວັງໄວ້:**

- ລະບົບການບັນທຶກ ແລະ ລາຍງານອຸບັດຕິເຫດ, ການບາດເຈັບ ແລະ ພະຍາດຕ່າງໆທາງອາຊີບຢູ່ໃນຂອບເຂດທົ່ວປະເທດ ແລະ ຢູ່ສະຖານທີ່ເຮັດວຽກໄດ້ຮັບການປັບປຸງໃຫ້ດີຂຶ້ນ;
- ສະຖິຕິຂອງອຸບັດຕິເຫດ, ການບາດເຈັບ ແລະ ພະຍາດທາງອາຊີບໄດ້ຮັບການພັດທະນາ;
- ດຳເນີນການສືບສວນກ່ຽວກັບອຸປະຕິເຫດ, ການບາດເຈັບ ແລະ ພະຍາດຕ່າງໆທາງອາຊີບແມ່ນໄດ້ຖືກຈັດຕັ້ງປະຕິບັດ;
- ການຕິດຕາມເຝົ້າລະວັງສຸຂະພາບຂອງຜູ້ອອກແຮງງານໄດ້ຖືກສົ່ງເສີມ.

### 3.4. ບູລິມະສິດທີ 4:

ສົ່ງເສີມລະບົບຄຸ້ມຄອງຄວາມປອດໄພ ແລະ ສຸຂະພາບແຮງງານ ຢູ່ສະຖານທີ່ເຮັດວຽກ.

**ຜົນໄດ້ຮັບທີ່ຄາດຫວັງໄວ້:**

- ທິດທາງກ່ຽວກັບລະບົບການຄຸ້ມຄອງຄວາມປອດໄພ ແລະ ສຸຂະພາບແຮງງານແມ່ນໄດ້ພັດທະນາ ແລະນຳສະເໜີ;
- ການຈັດຕັ້ງປະຕິບັດລະບົບການຄຸ້ມຄອງຄວາມປອດໄພ ແລະ ສຸຂະພາບແຮງງານແບບມີປະສິດທິຜົນໄດ້ຮັບການສະໜັບສະໜູນ.

### 3.5. ບູລິມະສິດທີ 5:

ປັບປຸງການປະຕິບັດຂອງຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານຕໍ່ກັບການຈັດຕັ້ງປະຕິບັດນະໂຍບາຍ ແລະ ກົດໝາຍຮ່ວມ ລວມເອົາກົດລະບຽບ ແລະ ມາດຕະການຄວາມປອດໄພ ແລະ ສຸຂະພາບແຮງງານ ຢູ່ທຸກໆສະຖານທີ່ເຮັດວຽກ.

**ຜົນໄດ້ຮັບທີ່ຄາດຫວັງໄວ້**

- ແຜນຍຸດທະສາດການຈັດຕັ້ງປະຕິບັດທີ່ສອດຄ່ອງໄດ້ຖືກນຳສະເໜີ ແລະ ນຳໃຊ້.
- ຄວາມອາດສາມາດຂອງຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານໃນການປະຕິບັດຕາມຄວາມປອດໄພ ແລະ ສຸຂະ ພາບແຮງງານໄດ້ເຂັ້ມແຂງຂຶ້ນ;
- ການໂຄສະນາປູກຈິດສຳນຶກລະດັບຊາດດ້ານວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານແມ່ນໄດ້ຮັບການຊຸກຍູ້, ສົ່ງເສີມ.

## II. ກອບການຈັດຕັ້ງປະຕິບັດ

ແຜນງານ 5 ປີ ຄັ້ງທີ III ກ່ຽວກັບການຈັດຕັ້ງປະຕິບັດວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານຢູ່ ສປປ ລາວ ຈະຖືກຈັດຕັ້ງປະຕິບັດໃນຂອບເຂດທົ່ວປະເທດໃນໄລຍະ 5 ປີ ແຕ່ປີ 2022-2026. ກະຊວງແຮງງານ ແລະ ສະຫັວດດີການສັງຄົມ ຈະເປັນເຈົ້າການຮັບຜິດຊອບໃນການຈັດຕັ້ງປະຕິບັດ, ຕິດຕາມ ແລະ ປະເມີນຜົນ

ແຜນງານ ໂດຍສົມທົບກັບ ອົງການຈັດຕັ້ງສາມຝ່າຍ, ທາງສັງຄົມ ແລະ ບັນດາ ພາກສ່ວນກ່ຽວຂ້ອງທັງຂັ້ນສູນກາງ, ແຂວງ, ເມືອງ, ແລະ ພາກສ່ວນກ່ຽວຂ້ອງອື່ນໆ.

## III. ຍຸດທະສາດສຳຫຼັບການຈັດຕັ້ງປະຕິບັດ

ຍຸດທະສາດເພື່ອຈັດຕັ້ງປະຕິບັດແຜນງານ 5 ປີ ຄັ້ງທີ III ວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ໃຫ້ມີປະສິດທິຜົນມີດັ່ງ ນີ້:

- ຮັບຮອງຄຳໝັ້ນສັນຍາຂອງລັດຖະບານ, ຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານຕໍ່ວຽກງານດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ;
- ເສີມຂະຫຍາຍບົດບາດ ແລະ ໜ້າທີ່ຂອງທຸກພາກສ່ວນກ່ຽວຂ້ອງໃນການຈັດຕັ້ງປະຕິບັດລະບົບການຄຸ້ມຄອງ ຄວາມປອດໄພ ແລະ ສຸຂະພາບແຮງງານຢູ່ສະຖານທີ່ເຮັດວຽກ ເພື່ອປ້ອງກັນອຸປະຕິເຫດທາງອາຊີບ, ການບາດເຈັບ ແລະ ພະຍາດອື່ນໆ;
- ປັບປຸງຄວາມເຂົ້າໃຈ, ທັດສະນະຄະຕິ, ພຶດຕິກຳ ແລະ ຄວາມສາມາດຂອງຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານ ໃນການຈັດຕັ້ງປະຕິບັດວັດທະນະທຳ ດ້ານຄວາມປອດໄພທາງອາຊີບ ແລະ ສຸຂະພາບແຮງງານ;
- ເສີມຂະຫຍາຍບົດບາດຂອງອົງການຈັດຕັ້ງວິຊາຊີບ, ສະຖາບັນຝຶກອົບຮົມຄວາມປອດໄພ ແລະ ສຸຂະພາບແຮງງານ, ຜູ້ປະຕິບັດ ແລະ ຂະແໜງການອື່ນໆເພື່ອປັບປຸງຄວາມເຂົ້າໃຈ, ທັດສະນະຄະຕິ, ພຶດຕິກຳ ແລະ ຄວາມສາມາດໃນການສົ່ງເສີມວັດທະນະທຳດ້ານຄວາມປອດໄພດ້ານອາຊີບ ແລະ ສຸຂະພາບ;
- ສ້າງຂີດຄວາມອາດສາມາດຂອງທຸກສະຖານທີ່ເຮັດວຽກໃນການປະຕິບັດລະບຽບການຄຸ້ມຄອງກ່ຽວກັບຄວາມປອດໄພ ແລະ ສຸຂະພາບແຮງງານ ເພື່ອປ້ອງກັນອຸປະຕິເຫດທາງອາຊີບ, ການບາດເຈັບ, ພະຍາດຕ່າງໆ ແລະ ສ້າງສະພາບແວດລ້ອມສະຖານທີ່ດີໃນສະຖານທີ່ເຮັດວຽກທີ່ປອດໄພ.

## IV. ຊັບພະຍາກອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມຈະເປັນໃຈກາງໃນການປະສານງານສົມທົບກັບກະຊວງສາທາລະນະສຸກ ແລະ ບັນດາກະຊວງທີ່ກ່ຽວຂ້ອງພ້ອມທັງບັນດາຄູ່ຮ່ວມງານສາມຝ່າຍ ຫຼື ທາງສັງຄົມ ເພື່ອແບ່ງຄວາມຮັບຜິດຊອບໃນການບັນລຸພັນທະກິດ ແລະ ເປົ້າໝາຍຂອງແຜນງານ, ເຊິ່ງລວມມີບັນດາການເຄື່ອນໄຫວກິດຈະກຳທີ່ໄດ້ຕົກລົງກັນ, ການໝູນໃຊ້ແຫຼ່ງຊັບພະຍາກອນທີ່ຈຳເປັນເຊິ່ງລວມມີງົບປະມານ ແລະ ຊັບພະຍາກອນມະນຸດ. ແຫຼ່ງງົບປະມານຕົ້ນຕໍແມ່ນມາຈາກລັດຖະບານແຫ່ງ ສປປ ລາວ. ໃນນັ້ນ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຈະປຶກສາຫາລືຮ່ວມກັບບັນດາພາກສ່ວນກ່ຽວຂ້ອງໃນການສ້າງແຜນງົບປະມານ ເພື່ອຂໍສະເໜີໃຫ້ລັດຖະບານພິຈາລະນາອະນຸມັດງົບປະມານທີ່ຈຳເປັນ. ນອກນັ້ນ, ກໍໃຫ້ມີການລະດົມທຶນຈາກອົງການຈັດຕັ້ງສາກົນ ແລະ ອົງການຕ່າງໆລວມທັງພາກລັດ ແລະ ພາກເອກະຊົນ.

## V. ການຕິດຕາມ ແລະ ການປະເມີນ

ເປັນສິ່ງສຳຄັນທີ່ຈະຕ້ອງຕິດຕາມຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນງານເປັນແຕ່ລະໄລຍະ, ນອກຈາກການປະເມີນຜົນການຈັດຕັ້ງປະຕິບັດແຜນງານໃນໄລຍະສຸດທ້າຍກ່ຽວກັບຜົນສຳເລັດຂອງແຜນງານ. ດ້ານກົນໄກ, ເຄື່ອງມືທີ່ມີປະສິດທິພາບໃນການຕິດຕາມ ແລະ ປະເມີນຜົນຄວນຈະຖືກພັດທະນາຂຶ້ນມາໂດຍການຮ່ວມມືກັບອົງການສາມຝ່າຍ ແລະ ພາກສ່ວນກ່ຽວຂ້ອງອື່ນໆ.

### 5.1. ລະບົບຕິດຕາມ ແລະ ປະເມີນ

ຄະນະຮັບຜິດຊອບວຽກທີ່ກ່ຽວຂ້ອງເຊິ່ງລວມມີພະນັກງານວິຊາການ ແລະ ນັກຄົ້ນຄວ້າຂັ້ນຕ່າງໆຈາກຫຼາຍກະຊວງຂອງລັດຖະບານ ແລະ ບັນດາຄູ່ຮ່ວມມືງານສາມຝ່າຍ ແລະ ທາງສັງຄົມ ຈະໄດ້ສ້າງຕັ້ງຂຶ້ນ ເພື່ອພັດທະນາ ແລະ ສ້າງແຜນການຕິດຕາມ ແລະ ປະເມີນຜົນ, ວິທີການ, ເຄື່ອງມື ເພື່ອຕິດຕາມກວດກາປະເມີນຄືນຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນງານເປັນປະຈໍາ, ເພື່ອໃຫ້ຄໍາປຶກສາແກ່ກະຊວງແຮງງານກ່ຽວກັບການຈັດຕັ້ງປະຕິບັດແຜນງານທີ່ມີປະສິດທິຜົນ, ການປະເມີນຜົນໄດ້ຮັບ ແລະ ຜົນສໍາເລັດຂອງແຜນງານ. ວິທີການອາດຈະປະກອບມີການປະເມີນຜົນທັງພາຍໃນ ແລະ ພາຍນອກ ເຊິ່ງສາມາດດໍາເນີນການໂດຍບຸກຄົນ ຫຼື ສະຖາບັນທີ່ເປັນເອກະລາດ. ຜົນການກວດກາ ແລະ ປະເມີນຜົນແມ່ນຈະໄດ້ຮັບການຈັດພິມເຜີຍແຜ່.

**ຕົວຊີ້ວັດສໍາຫຼັບການຕິດຕາມ ແລະ ການປະເມີນຜົນ**

ຊຸດຕົວຊີ້ວັດທີ່ສາມາດວັດແທກໄດ້ຈະຖືກພັດທະນາຂຶ້ນເພື່ອຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນ.

### 5.2. ແຜນການຕິດຕາມ ແລະ ປະເມີນຜົນ

ກະຊວງແຮງງານ ແລະ ສະຫັວດດີການສັງຄົມ, ໃນການຮ່ວມມື ແລະ ການປະສານງານກັບພາກສ່ວນກ່ຽວຂ້ອງ, ຄວນສ້າງແຜນການປະຈໍາປີເພື່ອຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນງານດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ 5 ປີ ຄັ້ງທີ III. ແຜນການຕິດຕາມ ແລະ ປະເມີນຜົນຄວນໄດ້ຮັບການພັດທະນາ ແລະ ອະນຸມັດໂດຍກະຊວງແຮງງານ ແລະ ສະຫັວດດີການສັງຄົມ ດ້ວຍການຕຶກລົງຈາກອົງການຈັດຕັ້ງສາມຝ່າຍ. ການຈັດຕັ້ງປະຕິບັດແຜນງານ 5 ປີ ຄັ້ງທີ III ກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ຈະໄດ້ຮັບການທົບທວນຄືນໃນທຸກໆປີ.

### 5.3. ວິທີການຕິດຕາມ ແລະ ການປະເມີນຜົນ

ສໍາລັບການຕິດຕາມກວດກາ ແລະ ການປະເມີນຜົນຂອງການຈັດຕັ້ງປະຕິບັດແຜນງານ, ຄວາມສາມາດ ແລະ ຄວາມພ້ອມຂອງຊັບພະຍາກອນ ຄວນໄດ້ຮັບການພິຈາລະນາ. ການສື່ສານ, ການປຶກສາຫາລືກັບຄູ່ຮ່ວມງານສາມຝ່າຍ ແລະ ຜູ້ມີສ່ວນກ່ຽວຂ້ອງທັງໝົດຢ່າງເປັນປົກກະຕິຄວນດໍາເນີນໃນທຸກຂັ້ນຕອນ, ເຊິ່ງເປັນສິ່ງສໍາຄັນໂດຍສະເພາະສໍາລັບການຕິດຕາມກວດກາລະບົບການຄຸ້ມຄອງຄວາມປອດໄພ ແລະ ສຸຂະພາບແຮງງານ ຢູ່ໃນສະຖານທີ່ເຮັດວຽກ. ການປະເມີນກາງສະໄໝຂອງການປະຕິບັດແຜນງານຈະໄດ້ຖືກດໍາເນີນໃນປີທີ 3 (2024) ເພື່ອກວດກາຄືນຄວາມຄືບໜ້າ, ສິ່ງທ້າທາຍ ແລະ ສິ່ງກີດຂວາງໃນການປະຕິບັດ. ການປະເມີນຜົນຂັ້ນສຸດທ້າຍຈະດໍາເນີນໃນໄຕມາດທີສອງຂອງປີສຸດທ້າຍ (2026) ເພື່ອສະແດງໃຫ້ເຫັນເຖິງການກະກຽມພັດທະນາແຜນງານ 5 ປີ ຄັ້ງທີ IV ກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ.

## VI. ການລາຍງານ

ບົດລາຍງານຄວາມຄືບໜ້າປະຈໍາປີກ່ຽວກັບການປະຕິບັດແຜນງານດັ່ງກ່າວ ຄວນໄດ້ຮັບການກະກຽມ ຫຼື ເປັນເຈົ້າການໂດຍກະຊວງແຮງງານ ແລະ ສະຫັວດດີການສັງຄົມ, ແລກປ່ຽນກັບຄູ່ຮ່ວມງານອົງການສາມຝ່າຍ, ທາງສັງຄົມ ແລະ ທຸກຄົນມີສ່ວນຮ່ວມອື່ນໆ ແລ້ວສົ່ງໃຫ້ລັດຖະບານ. ການປຶກສາຫາລືແຕ່ລະໄລຍະຄວນຈະຖືກຈັດຕັ້ງ , ເມື່ອມີຄວາມຈໍາເປັນ, ກັບຄູ່ຮ່ວມງານສາມຝ່າຍ ແລະ ພາກສ່ວນກ່ຽວຂ້ອງອື່ນໆ ເພື່ອກະກຽມບົດລາຍງານຄວາມ

ຄືບໜ້າ. ບົດລາຍງານການປະເມີນໄລຍະສຸດທ້າຍກ່ຽວກັບການຈັດຕັ້ງປະຕິບັດແຜນງານ ຄວນຖືກກະກຽມໂດຍກະຊວງແຮງງານ ແລະ ສະຫັວດດີການສັງຄົມ ໃນການປຶກສາຫາລືກັບທຸກພາກສ່ວນທີ່ກ່ຽວຂ້ອງ. ບົດລາຍງານສຸດທ້າຍຈະຖືກສົ່ງໃຫ້ລັດຖະບານໂດຍຜ່ານຄະນະກຳມະການຄວາມປອດໄພ ແລະ ສຸຂະພາບແຮງງານ.

**ກິດຈະກຳທີ່ຕ້ອງໄດ້ຈັດຕັ້ງປະຕິບັດຢູ່ໃນແຜນງານ 5 ປີ ຄັ້ງທີ III ກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ຢູ່ ສປປ ລາວ ແຕ່ 2022-2026.**

**ລາຍລະອຽດກິດຈະກຳຂອງແຜນງານ ແມ່ນໄດ້ນຳສະເໜີຢູ່ໃນຕາຕະລາງຂ້າງລຸ່ມ ນີ້:**

**ຕາຕະລາງ ທີ 1. ກອບກິດຈະກຳສຳຫຼັບ 5 ບູລິມະສິດ ກ່ຽວກັບວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ (OSH)**

| ລ/ດ | ຜົນໄດ້ຮັບທີ່ຄາດຫວັງໄວ້ | ກິດຈະກຳຫຼັກຕ່າງໆ | ຕົວຊີ້ວັດ | ພາກສ່ວນຮັບຜິດຊອບ | ເວລາ | ທີ່ມາຂອງແຫຼ່ງທຶນ |
|---|---|---|---|---|---|---|
| **1** | **ບູລິມະສິດທີ 1: ສ້າງກອບກົດໝາຍ ແລະ ນະໂຍບາຍດ້ານວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ** | | | | | |
| | 1.1. ການຈັດຕັ້ງປະຕິບັດດຳລັດວ່າດ້ວຍຄວາມປອດໄພ ແລະ ສຸຂະພາບແຮງງານໄດ້ຖືກທົບທວນ ແລະ ປະເມີນ | 1.1.1. ສ້າງຕັ້ງຄະນະກຳມະການທົບທວນການຈັດຕັ້ງປະຕິບັດດຳລັດ<br>1.1.2. ສ້າງແຜນວຽກສຳຫຼັບທົບທວນການຈັດຕັ້ງປະຕິບັດດຳລັດ<br>1.1.3. ກອງປະຊຸມປຶກສາຫາລືສາມຝ່າຍສຳຫຼັບການຈັດຕັ້ງປະຕິບັດດຳລັດ<br>1.1.4. ຕຽມບົດລາຍງານກ່ຽວກັບການທົບທວນ ແລະ ປະເມີນຜົນການຈັດຕັ້ງປະຕິບັດດຳລັດ | 1.1.1. ແຜນວຽກສຳລັບການທົບທວນຄືນການຈັດຕັ້ງປະຕິບັດດຳລັດ (ອອດ)<br>1.1.2. ຜົນໄດ້ຮັບຂອງກອງປະຊຸມປຶກສາຫາລື<br>1.1.3. ບົດລາຍງານການກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດດຳລັດ | MoLSW<br>LNCCI, LFTU<br>MoH. MoE<br>MoCI, LNA<br>MoPT, MoAF,<br>MoJ, OPML<br>MoEM,<br>MoNRE | 2022-2026 | ງົບປະມານລັດຖະບານ ແລະ ອົງການຈັດຕັ້ງສາກົນ |
| | 1.2. ກອບນິຕິກຳໄດ້ຖືກວິເຄາະໃຫ້ສອດຄ່ອງກັບມາດຕະຖານແຮງງານສາກົນ | 1.2.1. ສ້າງຮ່າງບົດວິເຄາະປຽບທຽບໂດຍເນັ້ນໃສ່ສະເພາະ C155 ແລະ C187<br>1.2.2. ກອງປະຊຸມຮັບຮອງບົດວິເຄາະປຽບທຽບ | 1.2.1. ບົດລາຍງານວິເຄາະສົມທຽບ | | | |
| | 1.3. ນະໂຍບາຍດ້ານຄວາມປອດໄພ ແລະ ສຸ ຂະພາບແຮງງານໄດ້ຖືກພັດທະນາຂຶ້ນ | 1.3.1. ປຶກສາຫາລືສາມຝ່າຍກ່ຽວກັບການຮ່າງນະໂຍບາຍດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ<br>1.3.2. ສ້າງຕັ້ງຄະນະປະຕິບັດງານສາມຝ່າຍກ່ຽວກັບຮ່າງນະໂຍບາຍດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ | 1.3.1 ຮ່າງນະໂຍບາຍດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ<br>1.3.2. ຮ່າງນະໂຍບາຍດ້ານຄວາມ | | | |

| | | | | | | |
|---|---|---|---|---|---|---|
| | | 1.3.3. ກອງປະຊຸມສາມຝ່າຍສຳຫຼັບຮັບຮອງຮ່າງນະໂຍບາຍດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ<br>1.3.4. ສະເໜີຮ່າງນະໂຍບາຍດ້ານຄວາມປອດໄພ ແລະ ສຸຂະພາບແຮງງານສະບັບສຸດທ້າຍໃຫ້ລັດຖະມົນຕີ ກະຊວງ ຮສສ ເພື່ອອະນຸມັດ | ປອດໄພ ແລະ ສຸຂະພາບແຮງງານສະບັບສຸດທ້າຍໄດ້ຖືກອານຸມັດໂດຍລັດຖະມົນຕີຂອງ | | | |
| **2** | **ບູລິມະສິດ ທີ 2: ສ້າງຂີດຄວາມສາມາດທາງດ້ານວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານຢູ່ທຸກລະດັບ** | | | | | |
| | 2.1. ຄວາມສາມາດຂອງພະນັກກວດກາແຮງງານ, ຄະນະກຳມະການ ແລະ ພະນັກງານຄວາມປອດໄພ ແລະ ສຸຂະພາບແຮງງານ ຢູ່ບ່ອນເຮັດວຽກເຂັ້ມແຂງຂຶ້ນ. | 2.1.1. ສ້າງຄະນະຮັບຜິດຊອບວຽກກ່ຽວກັບໂຄງການຝຶກອົບຮົມ / ການສຶກສາດ້ານຄວາມປອດໄພ ແລະ ສຸຂະພາບແຮງງານ<br>2.1.2. ບັນທຶກລາຍຊື່ບັນດາແຜນງານທີ່ມີໃນປະຈຸບັນ, ຄວາມຕ້ອງການ ແລະຊ່ອງຫວ່າງໃນການຝຶກອົບຮົມ ດ້ານຄວາມປອດໄພ ແລະ ສຸຂະພາບແຮງງານແຕ່ລະຂັ້ນ | 2.1.1. ເງື່ອນໄຂອ້າງອີງສຳລັບຄະນະປະຕິບັດງານກ່ຽວກັບໂຄງການຝຶກອົບ ຮົມ-ການສຶກສາ ອອດ<br>2.1.2. ຕົວເລກພະນັກງານອອດຜູ້ທີ່ໄດ້ຮັບການຝຶກອົບຮົມ | MoLSW, LFTU, LNCCI, MoH, MoE, ສະຖາບັນ ແລະ ບໍລິສັດ ຝຶກອົບຮົມຕ່າງໆ | 2022-2026 | ງົບປະມານຈາກລັດຖະບານ ແລະ ຫົວໜ່ວຍທຸລະກິດ |

| | | | | | | |
|---|---|---|---|---|---|---|
| | | 2.1.3. ລະບຸໂອກາດ ແລະ ແຫຼ່ງທຶນຝຶກ ອົບຮົມຢູ່ພາຍນອກປະເທດທີ່ມີຢູ່ໃນພາກພື້ນ / ໃນລະດັບໂລກ ລວມທັງແຜນງານຮ່ວມມືຝຶກອົບຮົມທັດສະນະສຶກສາ | 2.1.3. ຊີ້ແຜນງານຝຶກອົບຮົມ ອອດ ທີ່ມີຢູ່ / ໃຫ້ການຝຶກຢ່າງຕໍ່ເນື່ອງ<br>2.1..4. ຕົວເລກຜູ້ຊ່ຽວຊານອອດທີ່ຕ້ອງການຕາມກົດໝາຍ ແລະ ກົດລະບຽບໃນປະຈຸບັນ | | | |
| | 2.2. ລະບົບຮັບຮອງຢັ້ງຢືນແຫ່ງຊາດດ້ານວິຊາຊີບຄວາມປອດໄພ ແລະ ສຸຂະພາບແຮງງານແມ່ນໄດ້ຖືກສ້າງຂຶ້ນ | 2.2.1. ທົບທວນແຜນງານ ແລະ ເຄື່ອງມືສິດສອນທີ່ມີຢູ່ແລ້ວ | 2.2.1. ຕົວເລກກອງປະຊຸມຝຶກອົບຮົມທີ່ດຳເນີນໃນ 5 ປີທີ່ຜ່ານມາ | | | |
| | | 2.2.2. ສ້າງຍຸດທະສາດກ່ຽວກັບແຜນງານຝຶກອົບຮົມ /ການສຶກສາ ອອດ | 2.2.2. ຕົວເລກຜູ້ຊ່ຽວຊານດ້ານສຸຂະພາບທີ່ໄດ້ຮັບການຝຶກອົບຮົມກ່ຽວກັບທາງສຸຂະພາບອາຊີບ / ການແພດ | | | |
| | | 2.2.3. ສ້າງ / ປັບປຸງໂຄງການ ແລະ ເຄື່ອງມືການຝຶກອົບຮົມ ຄວາມປອດໄພ ແລະ ສຸຂະພາບແຮງງານ | 2.2.3. ຍຸດທະສາດກ່ຽວກັບແຜນງານຝຶກອົບຮົມ / ການສຶກສາ ຄວາມປອດໄພ ແລະ ສຸຂະພາບແຮງງານ | | | |
| | | 2.2.4. ສ້າງບົດສະເໜີໃຫ້ມີລະບົບການຢັ້ງຢືນ ອອດ ໃນ ສປປ ລາວ | 2.2.4. ຊຸດອຸປະກອນເຄື່ອງມືການຝຶກອົບຮົມຄວາມປອດໄພ ແລະ ສຸຂະພາບແຮງງານ | | | |
| | | 2.2.5. ທົດລອງລະບົບການຢັ້ງຢືນດ້ານສຸຂະພາບແຮງງານປອດໄພໃນຂະ ແ ໜງການເມືອງທີ່ຖືກເລືອກ | 2.2.5. ຕົວເລກຜູ້ທີ່ໄດ້ຮັບໃບຢັ້ງຢືນ | | | |
| | 2.3. ແຜນງານຝຶກອົບຮົມຄວາມປອດໄພ ແລະ ສຸ ຂະພາບແຮງງານ ທີ່ແນ ໃສ່ທຸກ | 2.3.1. ດຳເນີນການຝຶກອົບຮົມຄູຝຶກສຳລັບແຕ່ລະໂຄງການທົດລອງໂຄງການ | 2.3.1. ແຜນການຝຶກອົບຮົມແຕ່ລະຂັ້ນ<br>2.3.2. ຕົວເລກຂອງຄູຝຶກ | | | |

| | | | | | | |
|---|---|---|---|---|---|---|
| | ລະດັບ, ພັດທະ ນາຂຶ້ນ ໂດຍການຮ່ວມມືກັບສະຖາ ບັນການສຶກສາ ແລະ ຝຶກ ອົບຮົມວິຊາຊີບແລະ ພາກສ່ວນວິສາຫະກິດ, ສອດຄ່ອງກັບກອບຂອງ ອາຊຽນ. | ແລະ ເຄື່ອງມືການຝຶກອົບຮົມຄວາມ ປອດໄພ ແລະ ສຸຂະພາບແຮງງານ<br>2.3.2. ທົດລອງໂຄງການ ແລະ ເຄື່ອງມືການ ຝຶກອົບຮົມຄວາມປອດໄພ ແລະ ສຸຂະພາບແຮງງານ<br>2.3.3. ເລີ່ມຕົ້ນໂຄງການ ແລະ ເຄື່ອງມືການ ຝຶກອົບຮົມ / ການສຶກສາຄວາມປອດ ໄພ ແລະ ສຸຂະພາບແຮງງານ<br>2.3.4. ພັດທະນາ ແລະ ການຈັດຕັ້ງປະຕິບັດ ແຜນການຝຶກອົບຮົມແຕ່ລະຂັ້ນ<br>2.3.5. ສ້າງກົນໄກການທົບທວນຄືນສຳລັບ ແຜນງານຝຶກອົບຮົມຄວາມປອດໄພ ແລະ ສຸຂະພາບແຮງງານ<br>2.3.6. ທົບທວນຄືນລະບົບການຢັ້ງຢືນ ຄວາມປອດໄພ ແລະ ສຸຂະພາບແຮງ ງານ ແຫ່ງຊາດທີ່ມີຢູ່ໃນພາກພື້ນ<br>2.3.7. ປຶກສາຫາລືກັບບັນດາກະຊວງ, ສະຖາ ບັນ ແລະ ພາກສ່ວນທີ່ກ່ຽວຂ້ອງ | 2.3.3. ຕົວເລກການຝຶກອົບຮົມທີ່ ໄດ້ຈັດຕັ້ງປະຕິບັດ<br>2.3.4. ຕົວເລກຂອງຜູ້ທີ່ໄດ້ຮັບ ການຝຶກອົບຮົມ<br>2.3.5. ຕົວເລກບໍລິສັດທີ່ມີພະນັກ ງານຄວາມປອດໄພ<br>2.3.6. ຕົວເລກບໍລິສັດທີ່ມີຄະນະ ກຳມະການຄວາມປອດ ໄພ | | | |
| 3 | **ບູລິມະສິດທີ 3: ສ້າງ ແລະ ພັດທະນາລະບົບການເກັບກຳ, ຄຸ້ມຄອງ, ເຜີຍແຜ່ຂໍ້ມູນ ແລະ ຂໍ້ມູນຂ່າວສານຕ່າງໆກ່ຽວກັບອຸປະຕິເຫດທາງດ້ານອາຊີບ, ການ ບາດເຈັບ ແລະ ພະຍາດຕ່າງໆ.** | | | | | |
| | 3.1. ລະບົບການບັນທຶກ ແລະ ລາຍງານອຸປະຕິເຫດ,ການ ບາດເຈັບ ແລະ ພະຍາດ ຕ່າງໆທາງອາຊີບຢູ່ໃນລະ ດັບ ຊາດແລະຢູ່ ສະຖານ ທີ່ເຮັດວຽກໄດ້ຮັບການ ປັບປຸງ | 3.1.1. ສ້າງຄະນະປະຕິບັດລະບົບກ່ຽວກັບຂໍ້ ມູນ ຄວາມປອດໄພ ແລະ ສຸຂະພາບ ແຮງງານ ແຫ່ງຊາດກັບບັນດາກະຊວງ , ອົງການ ແລະ ອົງການຈັດ ຕັ້ງທີ່ ກ່ຽວຂ້ອງ<br>3.1.2. ທົບທວນຄືນລະບົບຂໍ້ມູນຄວາມ ປອດໄພ ແລະ ສຸຂະພາບແຮງງານທີ່ມີ ໃນປະຈຸບັນລວມທັງການບັນທຶກ | 3.1.1. ເງື່ອນໄຂອ້າງອີງສຳລັບ ຄະນະປະຕິບັດງານ<br>3.1.2. ທົບທວນບົດລາຍງານ ກ່ຽວກັບລະບົບຂໍ້ມູນ OSH ໃນປັດຈຸບັນ<br>3.1.3. ສະເໜີປັບປຸງກ່ຽວກັບ | MoLSW, LFTU, LNCCI, MoH, MoE, MoPT, MoEM, MoAF. | 2022-2026 | ງົບປະມານຈາກ ລັດຖະບານ, ອົງ ການຈັດຕັ້ງສາກົນ ແລະ ຫົວໜ່ວຍທຸະ ກິດ |

| | | | | | | |
|---|---|---|---|---|---|---|
| | | ແລະ ການແຈ້ງເຕືອນ<br>3.1.3. ສ້າງແຜນຜັງລະບົບແຫ່ງຊາດສະບັບປັບປຸງ ແລະເຄື່ອງມືທີ່ຈຳເປັນ | ລະບົບຂໍ້ມູນ ຄວາມປອດໄພ ແລະ ສຸຂະພາບແຮງງານ | | | |
| | | 3.1.4. ດຳເນີນການຝຶກອົບຮົມໃຫ້ບັນດາກະຊວງ, ອົງການທີ່ກ່ຽວຂ້ອງ | 3.1.4. ໂຄງການການຝຶກອົບຮົມ ແລະເຄື່ອງມື | | | |
| | | 3.1.5. ທົດລອງລະບົບໃໝ່ໃນຂົງເຂດທີ່ຖືກເລືອກ | 3.1.5. ຕົວເລກຜູ້ເຂົ້າຮ່ວມຝຶກອົບຮົມ | | | |
| | | 3.1.6. ສະເໜີລະບົບໃຫມ່ໃນລະດັບຊາດ | 3.1.6. ລາຍງານກ່ຽວກັບການທົດລອງລະບົບຂໍ້ມູນ ຄວາມປອດໄພ ແລະ ສຸຂະພາບແຮງງານ ໃຫ່ມ | | | |
| | | 3.1.7. ປັບປຸງເຄື່ອງມືລະດັບໂລກກ່ຽວກັບການບັນທຶກ ແລະ ການແຈ້ງເຕືອນສຳລັບ ສປປ ລາວ | 3.1.7. ເຄື່ອງມືກ່ຽວກັບການບັນທຶກ ແລະການແຈ້ງເຕືອນສະບັບເປັນພາສາລາວ | | | |
| | | 3.1.8. ດຳເນີນການຝຶກອົບຮົມກ່ຽວກັບການບັນທຶກ ແລະ ການແຈ້ງເຕືອນໃນພາກວິສາຫະກິດທີ່ໄດ້ຖືກຮັບຄັດເລືອກ | 3.1.8. ຕົວເລກວິສາຫະກິດ ແລະ ຜູ້ເຂົ້າຮ່ວມການຝຶກອົບຮົມ | | | |
| | | 3.1.9. ຈັດຕັ້ງຂະບວນການປູກຈິດສຳນຶກກ່ຽວກັບການບັນທຶກ ແລະ ການແຈ້ງເຕືອນ | 3.1.9. ເຄື່ອງມືປູກຈິດສຳນຶກ ແລະ ບົດລາຍງານການປະເມີນຜົນກ່ຽວກັບການໂຄສະນາ | | | |
| | 3.2. ສະຖິຕິຂອງອຸປະຕິເຫດ, ການບາດເຈັບ ແລະ ພະຍາດທາງອາຊີບໄດ້ຮັບການພັດທະນາ | 3.2.1. ສ້າງບົດລາຍງານປະຈຳປີກ່ຽວກັບອຸປະຕິເຫດ, ການບາດເຈັບ ແລະ ພະຍາດອາຊີບ. | 3.2.1. ບົດລາຍງານປະຈຳປີເຖິງ ILO ກ່ຽວກັບການບາດເຈັບທາງອາຊີບ | | | |
| | | 3.2.2. ວິເຄາະ ແລະ ເຜີຍແຜ່ຂໍ້ມູນກ່ຽວກັບອຸ | 3.2.2 ຕົວຊີ້ວັດເປົ້າໝາຍການພັດທະນາແບບຍືນຍົງ 8.8.1 | | | |

| | | | | | | |
|---|---|---|---|---|---|---|
| | 3.3. ການດຳເນີນສືບສວນກ່ຽວກັບອຸປະຕິເຫດ, ການບາດເຈັບ ແລະ ພະຍາດຕ່າງໆທາງອາຊີບ ແມ່ນໄດ້ຖືກຈັດຕັ້ງປະຕິບັດ<br>3.4. ການຕິດຕາມເຝົ້າລະວັງສຸຂະພາບຂອງຜູ້ອອກແຮງງານໄດ້ຖືກສົ່ງເສີມ. | ປະຕິເຫດ, ການບາດເຈັບ ແລະ ພະຍາດອາຊີບ.<br>3.3.1. ດຳເນີນການຝຶກອົບຮົມໃຫ້ແກ່ພະນັກງານກວດກາແຮງງານກ່ຽວກັບການສອບສວນອຸປະຕິເຫດ<br>3.4.1. ສ້າງປຶ້ມລາຍງານການກວດສຸຂະພາບປະຈຳປີຂອງຜູ້ອອກແຮງງານ. | 3.2.3. ເຜີຍແຜ່ເປັນທາງການ (ສະຖິຕິແຫ່ງຊາດ)<br>3.3.1. ເຄື່ອງມືຝຶກອົບຮົມການກວດກາອຸບັດຕິເຫດ<br>3.3.2. ຕົວເລກພະນັກງານກວດກາແຮງງານເຂົ້າຮ່ວມການຝຶກອົບຮົມ<br>3.4.1. ຕົວເລກຜູ້ອອກແຮງງານທົ່ວປະເທດທີ່ໄດ້ຮັບການກວດສຸຂະພາບປະຈຳປີ. | | | |
| 4 | **ບູລິມະສິດ ທີ 4: ສົ່ງເສີມລະບົບຄຸ້ມຄອງວຽກງານຄວາມປອດໄພ ແລະ ສຸຂະພາບແຮງງານ ຢູ່ສະຖານທີ່ເຮັດວຽກ** | | | | | |
| | 4. ທິດທາງກ່ຽວກັບລະ ບົບການຄຸ້ມຄອງຄວາມປອດ ໄພ ແລະ ສຸຂະພາບແຮງງານ ແມ່ນໄດ້ພັດທະນາ ແລະ ນຳສະ ເໜີ<br>4.2. ການຈັດຕັ້ງປະຕິບັດລະບົບການຄຸ້ມຄອງ ຄວາມປອດໄພ ແລະ ສຸຂະພາບແຮງງານແບບມີປະສິດທິຜົນໄດ້ຮັບການສະໜັບສະໜູນ. | 4.1.1. ຮ່າງຂໍ້ແນະນຳກ່ຽວກັບລະບົບການຄຸ້ມຄອງຄວາມປອດໄພ ແລະ ສຸຂະພາບແຮງງານທີ່ສອດຄ່ອງກັບ ILO-OSH2001<br>4.1.2. ຮັບຮອງໂດຍຄູ່ຮ່ວມງານສາມຝ່າຍກ່ຽວກັບຂໍ້ແນະນຳ<br>4.1.3. ສະເໜີຂໍ້ແນະນຳ<br>4.2.1. ສ້າງແຜນການຈັດຕັ້ງປະຕິບັດລະບົບການຄຸ້ມຄອງ ຄວາມປອດໄພ ແລະ ສຸຂະພາບແຮງງານ<br>4.2.2. ສ້າງຄວາມອາດສາມາດ (ການຝຶກອົບຮົມ) ສຳລັບຜູ້ກວດກາແຮງງານ | 4.1.1. ຂໍ້ແນະນຳລາວກ່ຽວກັບລະບົບການຄຸ້ມຄອງຄວາມປອດໄພ ແລະ ສຸຂະພາບແຮງງານ<br>4.1.2. ລາຍງານກອງປະຊຸມຮັບຮອງ<br>4.2.1. ແຜນການຈັດຕັ້ງປະຕິບັດຂໍ້ແນະນຳກ່ຽວກັບລະບົບການຄຸ້ມຄອງຄວາມປອດໄພ ແລະ ສຸຂະພາບແຮງງານ<br>4.2.2. ແຜນການຝຶກອົບຮົມໃຫ້ແກ່ພະນັກງານກວດກາ | MoLSW, LFTU, LNCCI, MoH, MoE MoPT, MoEM, MoAF ຄູ່ຮ່ວມງານທາງສັງຄົມ ແລະ ທຸລະກິດ | 2022-2026 | ງົບປະມານຈາກລັດຖະບານແລະຫົວໜ່ວຍທຸລະກິດ |

| | | | | | | |
|---|---|---|---|---|---|---|
| | | ກ່ຽວກັບລະບົບການຄຸ້ມຄອງຄວາມປອດໄພ ແລະ ສຸຂະພາບແຮງງານ<br><br>4.2.3. ການສ້າງຂີດຄວາມສາມາດ (ການຝຶກອົບຮົມ) ໃຫ້ແກ່ຜູ້ອອກແຮງງານ ແລະ ຜູ້ຈ້າງງານ<br><br>4.2.4. ສ້າງລະບົບທີ່ຮັບຮູ້ໂດຍສໍາຫຼັບວິສາຫະກິດທີ່ນໍາໃຊ້ລະບົບການຄຸ້ມຄອງ ຄວາມປອດໄພ ແລະ ສຸຂະພາບແຮງງານ ຢ່າງມີປະສິດທິຜົນ | ແຮງງານ, ຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານ<br>4.2.3. ອຸປະກອນການຝຶກອົບຮົມ<br><br>4.2.4. ຕົວເລກພະນັກງານກວດກາແຮງງານ,ຜູ້ອອກແຮງງານ ແລະ ຜູ້ຈ້າງແຮງງານທີ່ເຂົ້າຮ່ວມການຝຶກອົບຮົມ<br>4.2.5. ຕົວເລກວິສາຫະກິດທີ່ນໍາໃຊ້ລະບົບການຄຸ້ມຄອງຄວາມປອດໄພ ແລະ ສຸຂະພາບແຮງງານ | | | |
| 5 | **ບູລິມະສິດທີ 5: ປັບປຸງການປະຕິບັດຂອງຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານຕໍ່ກົດໝາຍ ແລະ ນະໂຍບາຍຮອມເອົາກົດລະບຽບ ວ່າດ້ວຍຄວາມປອດໄພ ແລະ ສຸຂະພາບແຮງງານ ຢູ່ທຸກໆສະຖານທີ່ເຮັດວຽກ** | | | | | |
| | 5.1. ແຜນຍຸດທະສາດການຈັດຕັ້ງປະຕິບັດທີ່ສອດຄ່ອງໄດ້ຖືກ ນໍາສະເໜີ ແລະ ນໍາໃຊ້ | 5.1.1. ຈັດຕັ້ງກອງປະຊຸມສໍາມະນາແຜນຍຸດທະສາດການຈັດຕັ້ງປະຕິບັດທີ່ ສອດຄ່ອງສໍາລັບຂະແໜງການ ແລະ ເມືອງທີ່ໄດ້ຖືກຄັດເລືອກ<br>5.1.2. ດໍາເນີນການຝຶກອົບຮົມກ່ຽວກັບແຜນຍຸດທະສາດການຈັດຕັ້ງປະຕິບັດທີ່ສອດຄ່ອງ | 5.1.1. ຕົວເລກທີ່ໄດ້ຮັບໃບຢັ້ງຢືນການຮັບຮູ້ຂອງລັດຖະບານກ່ຽວກັບການປະຕິບັດຕາມ ອອດ<br>5.1.2. ຕົວເລກຂອງຫົວໜ່ວຍທຸລະກິດໄດ້ຂຽນຂໍ້ແນະນໍາ, ນະໂຍບາຍ, ແຜນການຝຶກອົບຮົມ ແລະ ການປະຕິບັດກົດໝາຍ ແລະ ລະບຽບການອອດໃນປີ 2026. | MoLSW, LFTU, LNCCI, MoH, MoPT, MoEM, MoAF | 2022-2026 | ງົບປະມານຈາກລັດຖະບານ, ອົງການຈັດຕັ້ງສາກົນ ແລະ ຫົວໜ່ວຍທຸລະກິດ |

| | | | | | | |
|---|---|---|---|---|---|---|
| | | 5.1.3. ປະເມີນສະຖານະພາບປະຈຸບັນຂອງການປະຕິບັດຕາມລະບຽບກົດໝາຍອອດ<br><br>5.1.4. ປະເມີນຜົນການກວດກາແຮງງານ<br><br>5.1.5. ສ້າງເຄື່ອງມືກ່ຽວກັບການປະຕິບັດຕາມລະບຽບກົດໝາຍຄວາມປອດໄພ ແລະ ສຸຂະພາບແຮງງານ | 5.1.3. ຕົວເລກຫົວໜ່ວຍທຸລະກິດລາຍງານປະຕິບັດຕາມກົດໝາຍ ແລະ ກົດລະບຽບການຂອງ ຄວາມປອດໄພ ແລະ ສຸຂະພາບແຮງງານ.<br><br>5.1.4. ຕົວເລກຫົວໜ່ວຍທຸລະກິດ /ບ່ອນເຮັດວຽກທີ່ເຂົ້າຮ່ວມ ແລະ ປະຕິບັດຄວາມປອດໄພ ແລະ ສຸຂະພາບແຮງງານ ທີ່ປະສົມປະສານເຂົ້າໃນວຽກຄຸ້ມຄອງບໍລິຫານ ປີ 2022-2026.<br>5.1.5. ຕົວເລກຜູ້ເຂົ້າຮ່ວມໃນການຝຶກອົບຮົມແຜນຍຸດທະສາດການຈັດຕັ້ງປະຕິບັດທີ່ສອດ ຄ່ອງຕາມຍຸດທະສາດ<br>5.1.6. ຕົວເລກວິສາຫະກິດນຳໃຊ້ແຜນຍຸດທະສາດການຈັດຕັ້ງປະຕິບັດທີ່ສອດຄ່ອງຕາມລະ ບຽບກົດ ໝາຍ<br>5.1.7. ບົດລາຍງານການປະເມີນການປະຕິບັດທີ່ສອດຄ່ອງຕາມລະບຽບ ກົດໝາຍ<br>5.1.8. ບົດລາຍງານການປະເມີນ | | | |

| | | | | | | |
|---|---|---|---|---|---|---|
| | 5.2. ຄວາມອາດສາມາດຂອງຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານໃນການປະຕິບັດຕໍ່ຄວາມປອດໄພ ແລະ ສຸຂະພາບແຮງງານໄດ້ເຂັ້ມແຂງຂຶ້ນ | 5.2.1. ດຳເນີນການຝຶກອົບຮົມສຳລັບຜູ້ໃຊ້ແຮງງານເພື່ອປັບປຸງການປະຕິບັດຕາມລະບຽບກົດໝາຍ | ຜົນການກວດກາແຮງງານ<br>5.2.1. ຕົວເລກຂອງການຝຶກອົບຮົມຄວາມປອດໄພ ແລະ ສຸຂະພາບແຮງງານ, ການຊ່ວຍ ເຫຼືອເປັນຄູຝຶກສອນ, ແລະການເຜີຍແຜ່ຂໍ້ມູນຂ່າວສານລະບຽບການ ຄວາມປອດໄພ ແລະ ສຸຂະພາບແຮງງານ ສະໜອງໃຫ້ແກ່ ຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານໃນແຕ່ລະປີ.<br>5.2.2. ຕົວເລກຜູ້ເຂົ້າຮ່ວມ, ກະຊວງ, ອົງການຈັດຕັ້ງທີ່ເຂົ້າຮ່ວມກອງປະຊຸມ<br>5.2.3. ລາຍງານຜົນຂອງກອງປະຊຸມ<br>5.2.4. ຕົວເລກຜູ້ໃຊ້ແຮງງານທີ່ເຂົ້າຮ່ວມໃນການຝຶກອົບຮົມການປະຕິບັດລະບຽບກົດໝາຍ | | | |
| | 5.3. ການປູກຈິດສຳນຶກດ້ານຄວາມປອດໄພ ແລະ ສຸຂະພາບແຮງງານແມ່ນໄດ້ຖືກປະຕິບັດຜ່ານການໂຄສະນາລະດັບຊາດ, ຂະແໜງການ ແລະ ສະຖານທີ່ເຮັດວຽກ | 5.3.1. ກິດຈະກຳສົ່ງເສີມຄວາມປອດໄພ ແລະ ສຸຂະພາບແຮງງານໃນມື້ສະເຫຼີມສະຫຼອງວັນຄວາມປອດໄພ ແລະ ສຸຂະພາບໂລກຢູ່ສະຖານທີ່ເຮັດວຽກ<br>5.3.2. ກິດຈະກຳໂຄສະນາປູກຈິດສຳນຶກດ້ານສຸຂະພາບແຮງງານປອດໄພຢູ່ໃນລະດັບຊາດ, ຂະແໜງການ ແລະ ສະຖານທີ່ເຮັດວຽກ | 5.3.1. ຕົວເລກຂອງຜູ້ໃຊ້ແຮງງານ,ຜູ້ອອກແຮງງານທີ່ເຂົ້າຮ່ວມການໂຄສະນາປູກຈິດສຳນຶກຄວາມປອດໄພ ແລະ ສຸຂະ ພາບແຮງງານ.<br>5.3.2. ລາຍງານຜົນຂອງການ ຈັດ | | | |

| | | | | | | |
|---|---|---|---|---|---|---|
| | | | ຕັ້ງປະຕິບັດການປູກ ຈິດສຳ ນຶກດ້ານຄວາມ ປອດໄພ ແລະ ສຸຂະ ພາບແຮງງານ. | | | |

SDG 8.8.1. Indicator 8.8.1: Fatal and non-fatal occupational injuries per 100,000 workers, by sex and migrant status